ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0224 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 08 FEB 2016

# ຂໍ້ຕົກລົງ
## ວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ ເພັດທຍາບ

- ອີງຕາມ ດຳລັດສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ດຳລັດສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011 ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ;
- ອີງຕາມ ດຳລັດສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009 ວ່າດ້ວຍຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 0009/ຫສນຍ.ກລຂ ລົງວັນທີ 06 ມັງກອນ 2003.

### ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງດັ່ງນີ້:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການນຳເຂົ້າ ແລະ ສົ່ງອອກເພັດທຍາບ ເພື່ອຄຸ້ມຄອງ ແລະ ສົ່ງເສີມທຸລະກິດການນຳເຂົ້າ ແລະ ສົ່ງອອກເພັດທຍາບ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ແນໃສ່ຕ້ານ ແລະ ສະກັດກັ້ນການນຳເຂົ້າ-ສົ່ງອອກເພັດທຍາບ ທີ່ໄດ້ມາຈາກຄວາມຂັດແຍ່ງ ແລະ ການຄ້າ-ຂາຍເພັດທີ່ຜິດກົດໝາຍ, ປະກອບສ່ວນແກ່ການພັດທະນາເສດຖະກິດໃຫ້ເຂັ້ມແຂງ ແລະ ປົກປັກຮັກສາຄວາມສະຫງົບໃນສັງຄົມ.

**ມາດຕາ 2 ການນຳເຂົ້າ ແລະ ສົ່ງອອກ ເພັດທຍາບ**

ການນຳເຂົ້າ ແລະ ການສົ່ງອອກເພັດທຍາບ ແມ່ນການນຳເພັດທຍາບ ຫຼື ເພັດທີ່ມີຕຳນິເຂົ້າມາ ສປປ ລາວ ເພື່ອເຈຍລະໄນ ໂດຍຜ່ານຂະບວນການຂັດ, ຕັດ, ຜ່າ, ໂກນຂອບເປັນຮູບວົງມົນ ຫຼື ນຳມາສ້ອມແປງ ແລ້ວສົ່ງອອກຄືນ ຫຼື ສົ່ງໄປປະເທດທີສາມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເພັດທຍາບ** ໝາຍເຖິງ ທາດກາກບອນບໍລິສຸດທີ່ເກີດຈາກທຳມະຊາດ, ເປັນແກ້ວປະເສີດ ຫຼື ເຄິ່ງສຳເລັດຮູບທີ່ໄດ້ຜ່ານການສັງເຄາະຊະນິດໜຶ່ງ ມີລັກສະນະເປັນສີໃສທີ່ຫາຍາກ ແລະ ແຂງ ຊຶ່ງເປັນເພັດທີ່ບໍ່ທັນໄດ້ຜ່ານການເຈຍລະໄນ ແລະ ນອນຢູ່ໃນ 03 ລະຫັດສິນຄ້າ (HS code) ດັ່ງນີ້:

- **ລະຫັດສິນຄ້າ 7102.10** ເພັດທຍາບທີ່ນຳອອກຈາກບໍ່ ແລະ ບໍ່ທັນໄດ້ຜ່ານການຄັດເລືອກ;
- **ລະຫັດສິນຄ້າ 7102.21** ເພັດທຍາບທີ່ຜ່ານການຄັດເລືອກເຂົ້າໃນທາງດ້ານອຸດສາຫະກຳ;
- **ລະຫັດສິນຄ້າ 7102.31** ເພັດທຍາບທີ່ຜ່ານການຄັດເລືອກ ບໍ່ນຳໃຊ້ເຂົ້າໃນດ້ານອຸດສາຫະກຳ

2. ອົງການຄຸ້ມຄອງການຄ້າ-ຂາຍເພັດທາຍາບສາກົນ (Kimberly Process - KP) ໝາຍເຖິງ ໜ່ວຍງານຈັດຕັ້ງລະບົບການອອກໃບຢັ້ງຢືນຄວາມຖືກຕ້ອງ ແລະ ຕິດຕາມເພັດທາຍາບ (Kimberley Process Certification Scheme - KPCS) ທີ່ສ້າງຕັ້ງຂຶ້ນໂດຍລັດຖະບານ ຮ່ວມກັບກຸ່ມອຸດສາຫະກໍາເພັດທາຍາບທົ່ວໂລກ.

3. ໃບອະນຸຍາດ ໝາຍເຖິງ ໃບອະນຸຍາດນໍາເຂົ້າ ແລະ ສົ່ງອອກເພັດທາຍາບ ຢູ່ ສປປ ລາວ ທີ່ອອກໃຫ້ໂດຍອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ເພັດທາຍາບ.

4. ໃບ KPC (Kimberley Process Certification) ໝາຍເຖິງ ໃບຢັ້ງຢືນແຫຼ່ງທີ່ມາຂອງເພັດທາຍາບ ທີ່ອອກໃຫ້ໂດຍເຈົ້າໜ້າທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ.

### ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ນໍາໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການດໍາເນີນທຸລະກິດ ການນໍາເຂົ້າ ແລະ ສົ່ງອອກ ເພັດທາຍາບ ຢູ່ ສປປ ລາວ

## ໝວດທີ 2
## ການນໍາເຂົ້າ ແລະ ສົ່ງອອກ ເພັດທາຍາບ

### ມາດຕາ 5 ເງື່ອນໄຂຂອງຜູ້ນໍາເຂົ້າ, ຜູ້ສົ່ງອອກ ແລະ ເງື່ອນໄຂການນໍາເຂົ້າເພັດທາຍາບ

ຜູ້ນໍາເຂົ້າ ແລະ ຜູ້ສົ່ງອອກເພັດທາຍາບ ຕ້ອງເປັນນິຕິບຸກຄົນທີ່ດໍາເນີນທຸລະກິດການນໍາເຂົ້າ ແລະ ສົ່ງອອກເພັດທາຍາບ ຫຼື ຜູ້ດໍາເນີນທຸລະກິດເຈຍລະໄນເພັດ ທີ່ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ເພັດທາຍາບທີ່ນໍາເຂົ້າມາ ສປປ ລາວ ຕ້ອງເປັນເພັດທາຍາບທີ່ສົ່ງອອກຈາກປະເທດສະມາຊິກ (Kimberly Process - KP) ແລະ ບໍ່ແມ່ນເພັດທາຍາບທີ່ໄດ້ມາຈາກການຂັດແຍ່ງ ຫຼື ເພັດທີ່ຜິດກົດໝາຍ.

### ມາດຕາ 6 ການຂໍອະນຸຍາດນໍາເຂົ້າ ເພັດທາຍາບ

ຜູ້ນໍາເຂົ້າເພັດທາຍາບ ຕ້ອງປະກອບເອກະສານສະເໜີເຖິງ ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ເພັດທາຍາບ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດນໍາເຂົ້າເພັດທາຍາບ;
2. ສໍາເນົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ;
3. ໃບ KPC ຈາກປະເທດຕົ້ນທາງ;
4. ໃບກໍາກັບການສົ່ງສິນຄ້າ (Shipping Note).

### ມາດຕາ 7 ການຂໍອະນຸຍາດສົ່ງອອກ ເພັດທາຍາບ

ຜູ້ສົ່ງອອກເພັດທາຍາບ ຕ້ອງປະກອບເອກະສານສະເໜີເຖິງ ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກເພັດທາຍາບ ດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດສົ່ງອອກເພັດທາຍາບ;
2. ຄໍາຮ້ອງຂໍໃບ KPC;
3. ສໍາເນົາໃບອະນຸຍາດນໍາເຂົ້າໃນຄັ້ງກ່ອນ;
4. ສໍາເນົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ;
5. ໃບແຈ້ງລາຄາ (Invoice) ແລະ ໃບຫຸ້ມຫໍ່ (Packing List).

### ມາດຕາ 8 ການພິຈາລະນາອອກ ໃບອະນຸຍາດນໍາເຂົ້າ ເພັດທາຍາບ

ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະນຸຍາດນໍາເຂົ້າ ເພັດທາຍາບ ພ້ອມດ້ວຍເອກະສານປະກອບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້, ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ພິຈາລະນາອອກໃບອະນຸຍາດນໍາເຂົ້າໂດຍທັນທີ ຫຼື ຢ່າງຊ້າບໍ່ໃຫ້ເກີນ 10 ວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

ກໍລະນີທີ່ບໍ່ສາມາດອອກໃບອະນຸຍາດນໍາເຂົ້າ, ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ຕ້ອງແຈ້ງໃຫ້ຜູ້ສະເໜີຮັບຊາບເປັນລາຍລັກອັກສອນ ພ້ອມທັງຊີ້ແຈງເຫດຜົນ ພາຍໃນ 03 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ.

ໃບອະນຸຍາດນໍາເຂົ້າເພັດຫຍາບ ມີກໍານົດການນໍາໃຊ້ 60 ວັນ ນັບແຕ່ມື້ອອກອະນຸຍາດເປັນຕົ້ນໄປ.

**ມາດຕາ 9 ການພິຈາລະນາອອກ ໃບອະນຸຍາດສົ່ງອອກ ເພັດຫຍາບ ແລະ ໃບ KPC**

ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະນຸຍາດສົ່ງອອກ ເພັດຫຍາບ ແລະ ຄໍາຮ້ອງຂໍໃບ KPC ພ້ອມດ້ວຍເອກະສານທີ່ໄດ້ກໍານົດໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ພິຈາລະນາອອກໃບອະນຸຍາດສົ່ງອອກ ພ້ອມດ້ວຍໃບ KPC ໂດຍທັນທີ ຫຼື ຢ່າງຊ້າບໍ່ໃຫ້ເກີນ 10 ວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

ກໍລະນີທີ່ບໍ່ສາມາດອອກ ໃບອະນຸຍາດສົ່ງອອກເພັດຫຍາບ ຫຼື ໃບ KPC ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກຕ້ອງແຈ້ງໃຫ້ຜູ້ສະເໜີຮັບຊາບ ເປັນລາຍລັກອັກສອນ ພ້ອມທັງຊີ້ແຈງເຫດຜົນ ພາຍໃນ 03 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ.

ໃບອະນຸຍາດສົ່ງອອກເພັດຫຍາບ ແລະ ໃບ KPC ມີກໍານົດການນໍາໃຊ້ 60 ວັນ ນັບແຕ່ມື້ອອກອະນຸຍາດເປັນຕົ້ນໄປ.

**ມາດຕາ 10 ຄ່າທໍານຽມ ແລະ ຄ່າບໍລິການ**

ຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບການອອກໃບອະນຸຍາດນໍາເຂົ້າ, ໃບອະນຸຍາດສົ່ງອອກເພັດຫຍາບ ແລະ ໃບ KPC ແມ່ນ ປະຕິບັດຕາມລັດຖະບັນຍັດ ປະທານປະເທດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 3
## ສິດ ແລະ ພັນທະຂອງຜູ້ນໍາເຂົ້າ, ຜູ້ສົ່ງອອກ ແລະ ຜູ້ດໍາເນີນທຸລະກິດເຈຍລະໄນເພັດຫຍາບ

**ມາດຕາ 11 ຂອບເຂດສິດ**

ຜູ້ນໍາເຂົ້າ, ຜູ້ສົ່ງອອກ ແລະ ຜູ້ດໍາເນີນທຸລະກິດເຈຍລະໄນເພັດຫຍາບ ມີຂອບເຂດສິດ ດັ່ງນີ້:

1. ສະເໜີຂໍນໍາເຂົ້າ ຫຼື ສົ່ງອອກເພັດຫຍາບ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຕົນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 12 ພັນທະ**

ຜູ້ນໍາເຂົ້າ, ຜູ້ສົ່ງອອກ ແລະ ຜູ້ດໍາເນີນທຸລະກິດເຈຍລະໄນເພັດຫຍາບ ມີພັນທະດັ່ງນີ້:

1. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ສະຫຼຸບການນໍາເຂົ້າ ຫຼື ສົ່ງອອກ ເພັດຫຍາບຂອງຕົນ ໂດຍຜ່ານການຢັ້ງຢືນຈາກເຈົ້າໜ້າທີ່ພາສີ ປະຈໍາດ່ານແລ້ວສົ່ງໃຫ້ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ ປະຈໍາງວດ ແລະ ສົກປີ;
3. ການນໍາເຂົ້າ ຫຼື ສົ່ງອອກເພັດຫຍາບ ຕ້ອງຖືກຕ້ອງຕາມໃບອະນຸຍາດທີ່ອອກໃຫ້ໂດຍ ອົງການຄຸ້ມຄອງການນໍາເຂົ້າ ແລະ ການສົ່ງອອກ;

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 13 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາດັ່ງນີ້:

1. ໃຫ້ການຮ່ວມມື, ຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ເປັນສື່ກາງ, ໃຫ້ສິນບົນ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ;
3. ມີພຶດຕິກຳອື່ນໆ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 14 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ ການນຳເຂົ້າ ຫຼື ສົ່ງອອກເພັດຫຍາບ**

ຫ້າມຜູ້ນຳເຂົ້າ, ຜູ້ສົ່ງອອກ ແລະ ຜູ້ດຳເນີນທຸລະກິດເຈຍລະໄນເພັດຫຍາບ ມີພຶດຕິກຳດັ່ງນີ້ :

1. ນຳເຂົ້າ ຫຼື ສົ່ງອອກເພັດຫຍາບ ທີ່ໄດ້ມາຈາກຄວາມຂັດແຍ່ງ, ເພັດທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
2. ນຳເຂົ້າ ຫຼື ສົ່ງອອກເພັດຫຍາບ ໂດຍບໍ່ໄດ້ຮັບອະນຸຍາດຈາກ ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ;
3. ປອມແປງ ຫຼື ປ່ຽນແປງເນື້ອໃນໃບອະນຸຍາດນຳເຂົ້າ, ໃບອະນຸຍາດສົ່ງອອກ, ໃບ KPC ແລະ ເອກະສານທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ ເພັດຫຍາບ;
4. ມີພຶດຕິກຳອື່ນໆ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂໍ້ຫ້າມສຳລັບພະນັກງານລັດຖະກອນ**

ຫ້າມພະນັກງານລັດຖະກອນ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ເພື່ອຜົນປະໂຫຍດຂອງຕົນເອງ, ພັກພວກ ແລະ ຍາດພີ່ນ້ອງ;
3. ປອມແປງເອກະສານ, ກົດໜ່ວງຖ່ວງດຶງ ຫຼື ທຳລາຍເອກະສານ ກ່ຽວກັບການອະນຸຍາດນຳເຂົ້າ ແລະ ສົ່ງອອກເພັດຫຍາບ;
4. ມີພຶດຕິກຳອື່ນໆ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກເພັດຫຍາບ

**ມາດຕາ 16 ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກ ເພັດຫຍາບ**

ກະຊວງອຸດສາຫະກຳ ແລະ ການຄ້າເປັນຜູ້ຄຸ້ມຄອງວຽກງານການນຳເຂົ້າ ແລະ ສົ່ງອອກ ເພັດຫຍາບ ໂດຍມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຕາງໜ້າໃຫ້ກະຊວງຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ອົງການຄຸ້ມຄອງການຄ້າ-ຂາຍເພັດຫຍາບສາກົນ ໃນການປະຕິບັດວຽກງານດັ່ງກ່າວ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກເພັດຫຍາບ**

ອົງການຄຸ້ມຄອງການນຳເຂົ້າ ແລະ ການສົ່ງອອກເພັດຫຍາບ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່, ແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ;
2. ພິຈາລະນາອອກໃບອະນຸຍາດການນຳເຂົ້າ, ໃບອະນຸຍາດສົ່ງອອກ, ໃບ KPC ເພັດຫຍາບ;
3. ເປັນເຈົ້າການເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ອື່ນໆ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃນວຽກງານດັ່ງກ່າວ;
4. ຕິດຕາມ, ກວດກາ ການນຳເຂົ້າ ແລະ ສົ່ງອອກ ເພັດຫຍາບ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຍຶດເພັດຫຍາບທີ່ນຳເຂົ້າ ຫຼື ສົ່ງອອກ ບໍ່ຖືກຕ້ອງຕາມເງື່ອນໄຂ, ຂັ້ນຕອນທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ຫຼື ເພັດຫຍາບທີ່ມາຈາກຄວາມຂັດແຍ່ງ;
6. ສະຫຼຸບການນຳເຂົ້າ ແລະ ສົ່ງອອກເພັດຫຍາບໃຫ້ອົງການຄຸ້ມຄອງການຄ້າ-ຂາຍເພັດສາກົນ ເພື່ອຊາບເປັນແຕ່ລະໄລຍະ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ທາງວິໄນ, ປັບໃໝທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ;

ເພັດຫຍາບທີ່ນໍາເຂົ້າ ຫຼື ສົ່ງອອກ ທີ່ບໍ່ຖືກຕ້ອງຕາມເງື່ອນໄຂ ຫຼື ຂັ້ນຕອນທີ່ກໍານົດໃນຂໍ້ຕົກລົງສະບັບນີ້ ແລະ ເພັດຫຍາບທີ່ມາຈາກຄວາມຂັດແຍ່ງ ຈະຖືກຍຶດເປັນຊັບສິນຂອງລັດ ແລະ ລັດສາມາດນໍາໄປປະມູນຂາຍຕາມລະບຽບການ;

ຜູ້ນໍາເຂົ້າ, ຜູ້ສົ່ງອອກເພັດຫຍາບທີ່ບໍ່ຖືກຕ້ອງ ແລະ ຜູ້ຄອບຄອງເພັດຫຍາບ ທີ່ມາຈາກຄວາມຂັດແຍ່ງ ຈະຖືກປະຕິບັດໂທດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການນໍາເຂົ້າ ແລະ ສົ່ງອອກ ເປັນເຈົ້າການໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ກົມພາສີ (ກະຊວງການເງິນ), ກົມຕໍາຫຼວດເສດຖະກິດ (ກະຊວງປ້ອງກັນຄວາມສະຫງົບ) ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງສຸດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງ 15 ວັນ ນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນແຈ້ງການຂອງລັດຖະມົນຕີວ່າການກະຊວງການຄ້າ ກ່ຽວກັບການນໍາເຂົ້າ ແລະ ສົ່ງອອກເພັດທີ່ຍັງບໍ່ທັນເຈຍລະໄນ (ເພັດຫຍາບ) ສະບັບເລກທີ 0558/ກຄ.ກປທ, ລົງວັນທີ 03 ມິຖຸນາ 2003.

ລັດຖະມົນຕີ
ກະຊວງອຸດສາຫະກໍາ ແລະ ການຄ້າ

ນ ເຂັມມະນີ ພົນເສນາ